ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

--------------------

ແຂວງບໍ່ແກ້ວ
ເຈົ້າແຂວງ

ເລກທີ 496/ ຈຂ.ບກ
ບໍ່ແກ້ວ,ວັນທີ 10 ເມສາ 2018

# ຄໍາສັ່ງ
## ວ່າດ້ວຍການຕ້ານ, ເຝົ້າລະວັງ, ຄວບຄຸມ ແລະ ປ້ອງກັນພະຍາດປາກເປື່ອຍລີບເລັບ

ເຖິງ: ທ່ານຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ແຂວງ, ບັນດາເຈົ້າເມືອງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ອໍານາດການປົກຄອງບ້ານ ແລະ ຕະຫຼອດຮອດພໍ່ແມ່ປະຊາຊົນ ຜູ້ລ້ຽງສັດເລັບຄູ່ ( ງົວ,ຄວາຍ, ແບ້ ແລະ ໝູ ).

- **ອີງຕາມ** ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 03/ສພຊ,ລົງວັນທີ 11 ພະຈິກ 2016.
- **ອີງຕາມ** ລາຍງານ ຂອງກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0172/ກປ, ລົງວັນທີ02 ມີນາ 2018.
- **ອີງຕາມ** ການຊີ້ນໍາຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 28 ມີນາ 2018.

ເລີ່ມແຕ່ຕົ້ນເດືອນພະຈິກ 2017 ຫາ ເດືອນກຸມພາ 2018 ຕາມການລາຍງານພົບສັດເຈັບຍ້ອນພະຍາດປາກເປື່ອຍລີບເລັບ ເກີດຂຶ້ນຢູ່ແຂວງຫົວພັນ ແລະ ແຂວງໄຊຍະບູລີ ເຊິ່ງແຂວງບໍ່ແກ້ວກໍ່ແມ່ນແຂວງໜຶ່ງທີ່ມີຊາຍແດນຕິດກັບແຂວງໄຊຍະບູລີ.

ເພື່ອບໍ່ໃຫ້ພະຍາດດັ່ງກ່າວແຜ່ລາມເຂົ້າມາສູ່ແຂວງຂອງພວກເຮົາ ຕິດໃສ່ກັບສັດລ້ຽງຂອງປະຊາຊົນຢູ່ທ້ອງຖິ່ນ, ເຊິ່ງຈະກໍ່ໃຫ້ເກີດມີຄວາມສູນເສຍຕໍ່ເສດຖະກິດຂອງຊາດ ແລະ ຕໍ່ຊັບສິນຂອງພໍ່ແມ່ປະຊາຊົນຈຶ່ງມີຄວາມຈໍາເປັນຕ້ອງມີການຕິດຕາມ, ເຝົ້າລະວັງ, ຄວບຄຸມ ແລະ ປ້ອງກັນ ຢ່າງເຂັ້ມງວດ ຢູ່ພາຍໃນເມືອງຂອງຕົນ.

## ເຈົ້າແຂວງອອກຄໍາສັ່ງ:

1/ ໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ປະສານສົມທົບກັບ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງເປັນເຈົ້າການສົມທົບກັບ ສັດຕະວະແພດບ້ານ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງອື່ນຈັດຕັ້ງໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມໃຫ້ປະຊາຊົນ ແລະ ຜູ້ປະກອບການທີ່ພົວພັນເຖິງການລ້ຽງ ງົວ, ຄວາຍ, ແບ້ ແລະ ໝູ ທັງແບບຄອບຄົວ, ເປັນກຸ່ມ ຫຼື ເປັນຟາມການຊື້ຂາຍສັດໃນທົ່ວເມືອງຮັບຮູ້ ແລະ ເຂົ້າໃຈເຖິງຄວາມເປັນອັນຕະລາຍຮ້າຍແຮງຂອງພະຍາດປາກເປື່ອຍລີບເລັບ, ພ້ອມທັງຊຸກຍູ້ແນະນໍາໃຫ້ເອົາໃຈໃສ່ປະຕິບັດກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ດໍາລັດ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ໃຫ້ຄວາມຮ່ວມມືຕໍ່ກັບມາດຕະການ ເຝົ້າລະວັງສະກັດກັ້ນ, ຄວບຄຸມ ແລະ ປ້ອງກັນພະຍາດທີ່ທາງຂັ້ນເທິງວາງອອກຢ່າງເຄັ່ງຄັດ.

2/ ໃຫ້ເຈົ້າເມືອງ, ໜ່ວຍງານກ່ຽວຂ້ອງຂອງເມືອງ ເປັນເຈົ້າການລະດົມຊຸກຍູ້ເຈົ້າຂອງສັດ ຫຼື ຜູ້ປະກອບການສັກຢາກັນພະຍາດປາກເປື່ອຍລີ້ນເລັບໃຫ້ສັດລ້ຽງຂອງຕົນໃນເຂດທີ່ຫຼໍ່ແຫຼມ ຫຼື ເຂດທີ່ມີຄວາມສ່ຽງສູງໃຫ້ທົ່ວເຖິງ. ສ່ວນຢາກັນພະຍາດໃຫ້ສະເໜີພົວພັນກັບຂະແໜງລ້ຽງສັດ ແລະ ການປະມົງຈະເປັນຜູ້ຈັດຫາ ແລະ ສະໜອງໃຫ້.

- ໃຫ້ຊຸກຍູ້ແນະນຳປະຊາຊົນເອົາໃຈໃສ່ຕິດຕາມກວດກາສຸຂະພາບສັດລ້ຽງຂອງຕົນຢ່າງໃກ້ຊິດຖ້າພົບເຫັນງົວ,ຄວາຍ, ແບ້ ແລະ ໝູ ມີອາການຜິດປົກກະຕິເປັນຕຸ່ມເປື່ອຍຕາມດັງຮີມປາກ, ລີ້ນ, ເຕົ້ານົມ ແລະ ແຫງ່ມຕີນເປັນຕົ້ນ ຫຼື ສົງໃສວ່າສັດເປັນພະຍາດປາກເປື່ອຍລີ້ນເລັບເຈົ້າຂອງສັດ ຫຼື ຜູ້ທີ່ພົບເຫັນໃຫ້ຮີບຮ້ອນລາຍງານຕໍ່ສັດຕະວະແພດບ້ານ ຫຼື ນາຍບ້ານໂດຍດ່ວນແລ້ວລາຍງານຕໍ່ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເພື່ອລົງໄປຕິດຕາມກວດກາສະພາບການເກີດພະຍາດຕົວຈິງ.

- ກໍລະນີສົງໃສສັດເປັນພະຍາດປາກເປື່ອຍລີ້ນເລັບໃຫ້ຈັດຕັ້ງທີມງານວິຊາການຕິດຕາມເຝົ້າລະວັງພະຍາດຢ່າງໃກ້ຊິດ, ພ້ອມນີ້ກໍ່ໃຫ້ກຽມພ້ອມດ້ານກຳລັງຄົນ, ວັດຖຸອຸປະກອນ, ຍານພາຫະນະ, ງົບປະມານ ແລະ ຊັກຊ້ອມເພື່ອກຽມຮັບມືກັບການລະບາດຂອງພະຍາດ, ຈັດຕັ້ງກັນລົງພາກສະໜາມເພື່ອຕິດຕາມກວດກາເກັບກຳຂໍ້ມູນສືບສວນ, ສອບສວນ ຫາພະຍາດຕາມຫຼັກວິຊາການດ້ານລະບາດວິທະຍາ, ເກັບຊິ້ນສ່ວນຕົວຢ່າງສົ່ງກວດຢູ່ຫ້ອງວິໄຈ, ປ້ອງກັນ ແລະ ປິ່ນປົວສັດເຈັບ, ພ້ອມນັ້ນກໍ່ໃຫ້ລາຍງານສະພາບສັດເຈັບ ຫຼື ຕາຍເປັນແຕ່ລະວັນ, ຫາກບໍ່ມີກໍ່ໃຫ້ລາຍງານ "ບໍ່ມີ".

- ກໍລະນີໄດ້ຮັບການຢືນຢັນພົບເຊື້ອພະຍາດປາກເປື່ອຍລີ້ນເລັບ ຈາກຫ້ອງວິໄຈພະຍາດສັດ, ໃຫ້ລົງໄປກວດກາຕົວຈິງຂອບເຂດຂອງການລະບາດຂອງພະຍາດ, ພ້ອມທັງໃຫ້ກຳນົດຂອບເຂດການລະບາດໂດຍໃຫ້ອີງໃສ່ສະພາບເງື່ອນໄຂສິ່ງແວດລ້ອມ ແລະ ທາງດ້ານພູມສາດເປັນຫຼັກ ແລະ ກຳນົດຂອບເຂດເຝົ້າລະວັງພະຍາດຢ່າງເຄັ່ງຄັດທີ່ມີໄລຍະຫ່າງຈາກຂອບເຂດລະບາດຂອງພະຍາດ 5 ກິໂລແມັດເປັນຢ່າງໜ້ອຍ, ພ້ອມນັ້ນກໍ່ໃຫ້ນຳສະເໜີອົງການປົກຄອງທ້ອງຖິ່ນປະກາດເປັນເຂດລະບາດພະຍາດສັດ ແລະ ເຂດເຝົ້າລະວັງພະຍາດສັດຢ່າງເຄັ່ງຄັດຢ່າງເປັນທາງການ ແລະ ໃຫ້ຊຸກຍູ້ແນະນຳເຈົ້າຂອງສັດປະຕິບັດດັ່ງນີ້:

**<u>ຂອບເຂດທີ່ປະກາດເປັນເຂດພະຍາດລະບາດ</u>:**

- ໃຫ້ແຍກສັດເຈັບອອກຈາກຝູງຜູກມັດ ຫຼື ຂັງໄວ້ບ່ອນທີ່ສະອາດແລະແຫ້ງດີແລ້ວທຳການປິ່ນປົວ.
- ຫ້າມບໍ່ໃຫ້ຂ້າສັດທີ່ກ່ຽວຂ້ອງກັບພະຍາດທີ່ກຳລັງລະບາດນັບທັງສັດທີ່ແຂງແຮງຫຼືສັດເຈັບ.
- ຫ້າມນຳເອົາຊິ້ນສ່ວນຕ່າງໆຂອງສັດຕາຍໄປປຸງແຕ່ງເປັນອາຫານຫຼືຈຳໜ່າຍຊື້ຂາຍຢ່າງເດັດຂາດ.
- ຫ້າມບໍ່ໃຫ້ປະຊາກສິບສັດໃຫ້ເໜົ່າເປື່ອຍ ຫຼື ຖິ້ມລົງໜອງ, ຫ້ວຍນ້ຳລຳເຊເດັດຂາດ,ໃຫ້ເຜົາ ຫຼື ຝັງໃຫ້ເລິກແລ້ວໂຮຍດ້ວຍປູນຂາວຫຼືຢາຂ້າເຊື້ອອື່ນໆ.
- ໃນບ່ອນທີ່ພົບເຫັນສັດເຈັບຫຼືຕາຍໃຫ້ເຮັດອະນາໄມ ແລະ ຂ້າເຊື້ອພະຍາດດ້ວຍຢາຂ້າເຊື້ອຢ່າງທົ່ວເຖິງ
- ຫ້າມບໍ່ໃຫ້ເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດທຸກຊະນິດທີ່ກ່ຽວຂ້ອງກັບພະຍາດທີ່ກຳລັງລະບາດເຂົ້າ - ອອກເຂດ ພະຍາດລະບາດຫຼືສົງໃສວ່າມີພະຍາດລະບາດຢ່າງເດັດຂາດຈົນກວ່າວ່າການລະບາດຂອງພະຍາດດັ່ງກ່າວໄດ້ສະຫງົບລົງເປັນປົກກະຕິຄື 21 ວັນ ຫຼັງຈາກສັດເຈັບໂຕສຸດທ້າຍໃນເຂດລະບາດໄດ້ຫາຍດີເປັນປົກກະຕິ.
- ໃຫ້ສົມທົບກັບເຈົ້າໜ້າທີ່ໆກ່ຽວຂ້ອງແລະອົງການປົກຄອງທ້ອງຖິ່ນຕັ້ງຈຸດດ່ານກວດກາສະກັດກັ້ນການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ, ຫາກພົບເຫັນຜູ້ລະເມີດຝ່າຝືນ, ລັກລອບການເຄື່ອນຍ້າຍສັດແລະຜະລິດຕະພັນສັດໃຫ້ກ່າວເຕືອນ,ປັບໃໝຫຼືດຳເນີນຄະດີຕາມກໍລະນີໜັກຫຼືເບົາຕາມລະບຽບກົດໝາຍ, ສ່ວນສັດຫຼືຜະລິດຕະພັນສັດຂອງກາງຕ້ອງສົ່ງໃຫ້ສັດຕະວະແພດຂອງເມືອງ, ແຂວງກັກກັນ(ສັດ) ແລະ ທຳລາຍຕໍ່ໄປ(ຜະລິດຕະພັນສັດ).
- ໃຫ້ຈັດຕັ້ງຊີດພົ່ນຢາຂ້າເຊື້ອໃສ່ພາຫະນະທຸກຊະນິດ, ວັດຖຸພາຫະທີ່ອາດຕິດເຊື້ອອອກຈາກເຂດພະຍາດລະບາດ.

**<u>ຂອບເຂດທີ່ປະກາດເປັນເຂດເຝົ້າລະວັງຢ່າງເຄັ່ງຄັດ</u>.**

- ຕິດຕາມກວດກາສຸຂະພາບສັດລ້ຽງຂອງຕົນຢ່າງໃກ້ຊິດ.
- ສັກຢາກັນພະຍາດໃຫ້ທົ່ວເຖິງ.

1. ຊຸກຍູ້ແນະນຳດ່ານກວດກາສັດຕະວະແພດຊາຍແດນ ໃຫ້ເອົາໃຈໃສ່ຕິດຕາມກວດກາການນຳເຂົ້າສັດ ແລະ ຜະລິດຕະພັນສັດ, ຕິດຕາມຂໍ້ມູນຂ່າວສານແຫຼ່ງທີ່ມາຂອງສັດ ແລະ ຜະລິດຕະພັນສັດຢ່າງໃກ້ຊິດໂດຍອະນຸຍາດໃຫ້ນຳເຂົ້າຈາກເຂດ ຫຼື ປະເທດທີ່ປອດຈາກພະຍາດປາກເປື່ອຍລີ້ນເລັບ, ກໍລະນີສັດມີຊີວິດຕ້ອງມີໃບຢັ້ງຢືນສຸຂະພາບສັດ ແລະ ໄດ້ສັກຢາກັນພະຍາດປາກເປື່ອຍລີ້ນເລັບ ຫຼື ໃບຢັ້ງຢືນສຸຂະນາໄມກໍລະນີຜະລິດຕະພັນສັດຈາກອົງກອນສັດຕະວະແພດຂອງລັດ, ມາຈາກປະເທດຕົ້ນທາງຢ່າງເປັນທາງການ.

2. ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຮີບຮ້ອນປະສານສົມທົບກັບສັດຕະວະແພດບ້ານ, ຜູ້ລ້ຽງສັດແບບຄອບຄົວ, ເປັນກຸ່ມ ຫຼື ຟາມ ແລະ ຜູ້ປະກອບການຈົ່ງພ້ອມກັນນຳໄປປະຕິບັດດ້ວຍຄວາມຮັບຜິດຊອບສູງ.

3. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້. ຊີ້ນຳຂະແໜງການກ່ຽວຂ້ອງ ແລະ ມອບໃຫ້ທ່ານເຈົ້າເມືອງ 5 ເມືອງ ຂອງແຂວງບໍ່ແກ້ວ ຊ່ວຍຊີ້ນຳ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຈັດຕັ້ງລົງໂຄສະນາ, ເຜີຍແຜ່ຂະຫຍາຍ ເຊື່ອມຊຶມຄຳສັ່ງສະບັບນີ້ໃຫ້ອຳນາດການປົກຄອງບ້ານ, ພໍ່ແມ່ປະຊາຊົນຜູ້ລ້ຽງສັດ ໃຫ້ທົ່ວເຖິງ.

4. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງລົງພິມລົງຈົດໝາຍເຫດທາງລັດຖະການ 15 ວັນ.

ເຈົ້າແຂວງ ແຂວງບໍ່ແກ້ວ

ປອ ຄຳພັນ ເຜີຍຍະວົງ

ບ່ອນສົ່ງ:

- ພະແນກກະສິກຳ ແລະ ປ່າໄມ້ແຂວງ 1 ສະບັບ.
- ຫ້ອງວ່າການປົກຄອງເມືອງໆຊ່ວຍຊີ້ນຳ 1 ສະບັບ.
- ຫ້ອງການກະສິກຳ ແລະ ປ່າໄມ້ເມືອງໆຈັດຕັ້ງປະຕິບັດ 1 ສະບັບ.
- ເກັບມ້ຽນ 1 ສະບັບ.